# ຫຼັກສູດຊັ້ນປະຖົມສຶກສາ ປີທີ 5 ສະບັບປັບປຸງໃໝ່

> ພາບລວມ
> ວິຊາພາສາລາວ
> ວິຊາພາສາອັງກິດ
> ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ
> ການວາງແຜນການສອນ
> ການປະເມີນ
> ຫ້ອງຄວບ









# ພາບລວມຂອງຫຼັກສູດຊັ້ນປະຖົມສຶກສາ ປີທີ 5

ກະຊວງສຶກສາທິການ ແລະ ກິລາ ໄດ້ພັດທະນາຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສະບັບປັບປຸງໃໝ່ ແລະ ສື່ການຮຽນການສອນແບບໃໝ່ສຳລັບນັກຮຽນ ແລະ ຄູ. ການຈັດຕັ້ງປະຕິບັດການຮຽນການສອນຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່ໃນໂຮງຮຽນປະຖົມໄດ້ດຳເນີນໄປແຕ່ລະຂັ້ນຮຽນໃນທຸກໆປີ ຊຶ່ງເລີ່ມປະຕິບັດກັບຂັ້ນ ປ.1 ໃນເດືອນກັນຍາປີ 2019. ສຳລັບການຈັດການຮຽນການສອນຫຼັກສູດຊັ້ນປະຖົມປີທີ 5 ສະບັບປັບປຸງໃໝ່ນີ້ຈະເລີ່ມຈັດຕັ້ງປະຕິບັດໃນທຸກໂຮງຮຽນທົ່ວປະເທດ ໃນເດືອນກັນຍາປີ 2023 ຊຶ່ງວິຊາພາສາລາວ, ພາສາອັງກິດ ແລະ ວິທະຍາສາດ ແລະ ສິ່ງແວດລ້ອມ ແມ່ນໄດ້ຮັບການສະໜັບສະໜູນຈາກລັດຖະບານອົດສະຕຣາລີ.

ຄວາມແຕກຕ່າງຫຼັກໆທີ່ຢູ່ໃນຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່ນີ້ ແມ່ນວິທີການຮຽນການສອນແບບໃໝ່ໂດຍເນັ້ນໃຫ້ນັກຮຽນໄດ້ປະຕິບັດຕົວຈິງ, ຊຶ່ງເປັນວິທີສອນແບບເອົານັກຮຽນເປັນໃຈກາງ. ການຮຽນການສອນແບບເນັ້ນໃຫ້ນັກຮຽນໄດ້ປະຕິບັດຕົວຈິງນີ້ ສະແດງໃຫ້ເຫັນເຖິງບົດບາດຄວາມສຳຄັນຂອງຂະບວນການຄົ້ນຄິດຂອງນັກຮຽນຕໍ່ກັບຄວາມສຳເລັດໃນການຮຽນຮູ້ຂອງພວກເຂົາ. ນັກຮຽນຈະໄດ້ຮຽນຮູ້ໂດຍຜ່ານການປະຕິບັດຕົວຈິງ ຊຶ່ງສະທ້ອນໃຫ້ເຫັນວ່າ ພວກເຂົາໄດ້ຮັບຄວາມຮູ້ໃໝ່ໆ ແລະ ສາມາດນຳໃຊ້ທັກສະໃໝ່ໆຂອງພວກເຂົາເຂົ້າໃນກິດຈະກຳຕ່າງໆໃນຫ້ອງຮຽນ ແລະ ນອກຫ້ອງຮຽນ.

ຫຼັກສູດໃໝ່ນີ້ ສະແດງໃຫ້ເຫັນເຖິງການປ່ຽນແປງອັນໃຫຍ່ຫຼວງໃນການຮຽນການສອນ ຊຶ່ງຄູມີບົດບາສຳຄັນຫຼາຍໃນການນຳພາຫ້ອງຮຽນທີ່ເນັ້ນໃຫ້ນັກຮຽນໄດ້ປະຕິບັດຕົວຈິງ. ຄູຕ້ອງໄດ້ເນັ້ນໃສ່ການໃຫ້ຄວາມຊ່ວຍເຫຼືອນັກຮຽນໃນຂະບວນການຮຽນຂອງພວກເຂົາຢ່າງມີປະສິດຕິພາບ.

ຊຸດອຸປະກອນສື່ການຮຽນການສອນສຳລັບຂັ້ນ ປ.5 ແມ່ນເຄື່ອງມືທີ່ສຳຄັນເພື່ອຊ່ວຍໃຫ້ຄູປ່ຽນແປງ ຫຼື ປັບປ່ຽນວິທີການຈັດການຮຽນການສອນ. ປຶ້ມຄູ່ມືຄູສະບັບປັບປຸງໃໝ່ປະກອບມີຂໍ້ມູນທີ່ເປັນປະໂຫຍດ ແລະ ມີບົດຮຽນຕົວແບບເພື່ອຊ່ວຍໃຫ້ຄູປັບປຸງວິທີການສອນ. ໃນແຕ່ລະບົດຮຽນມີບັນດາກິດຈະກຳການຮຽນຕ່າງໆ ລວມທັງການຝຶກປະຕິບັດ ແລະ ການນຳໃຊ້ໃນຊີວິດຈິງ.

ວິທີການປະເມີນນັກຮຽນ ໄດ້ມີການປັບປ່ຽນເພື່ອຊ່ວຍຕິດຕາມການພັດທະນາທັດສະນະຄະຕິຄວາມຮູ້ ແລະ ທັກສະຕ່າງໆ.

ເພື່ອໃຫ້ການຊ່ວຍເຫຼືອຄູສອນຫ້ອງຄວບໃນການວາງແຜນ ແລະ ການສອນໃນຫ້ອງຮຽນ, ຄຳແນະນຳໃນປຶ້ມຄູ່ມືຄູຂອງວິຊາພາສາລາວຂັ້ນ ປ.5 ປະກອບມີຄຳແນະນຳສຳລັບວິທີການສອນຫ້ອງຄວບ ແລະ ຫຼັກສູດໄດ້ຈັດໄປຕາມຂໍ້ຕ່າງໆ



ເພື່ອໃຫ້ຄູສາມາດສອນຫົວຂໍ້ດຽວກັນສຳລັບນັກຮຽນໃນຂັ້ນຮຽນຕ່າງກັນໃນເວລາທີ່ຕ້ອງສອນຫ້ອງຄວບ.

**ຊຸດອຸປະກອນສື່ການຮຽນການສອນສຳລັບຄູຂັ້ນ ປ.5**

- ປຶ້ມແບບຮຽນຂັ້ນ ປ.5 1 ຊຸດ: ວິຊາພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ພາສາອັງກິດ
- ປຶ້ມຄູ່ມືຄູຂັ້ນ ປ.5 1 ຊຸດ: ວິຊາພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ພາສາອັງກິດ
- ຊຸດຟາຍການສອນສຽງ, ຊຸດບັດຄຳ ແລະ ບັດຮູບພາບ 1 ຊຸດ, ໂປສະເຕີຂະໜາດໃຫຍ່ 2 ແຜ່ນ ສຳລັບຄຳສັບ Sight word ແລະ ສຳລັບການອອກສຽງໃນພາສາອັງກິດ ແລະ ໂປສະເຕີຂະໜາດ A4 ໜຶ່ງແຜ່ນ ສຳລັບການອອກສຽງໃນພາສາອັງກິດຂັ້ນ ປ.5 ພ້ອມທັງເຈ້ຍຄຳແນະນຳໃນການໃຊ້.
- ຊຸດອຸປະກອນຝຶກຊ້ອມວິຊາວິທະຍາສາດ 1 ຊຸດ ປະກອບມີ 31 ຢ່າງ ແລະ ເຈ້ຍຄຳແນະນຳໃນການໃຊ້ (ລວມທັງຊຸດອຸປະກອນທົດລອງໄຟຟ້າ)
- ໂປສະເຕີຮັກສາປຶ້ມແບບຮຽນ 1 ແຜ່ນ ສຳລັບຕິດໄວ້ທາງດ້ານນອກຂອງໂຮງຮຽນໃນບ່ອນທີ່ຜູ້ປົກຄອງ ແລະ ຄົນທົ່ວໄປສາມາດເຫັນໄດ້
- ປຶ້ມສຳລັບສຳມະນາກອນກ່ຽວກັບການຝຶກອົບຮົມຫຼັກສູດຂັ້ນ ປ.5 1 ຊຸດ
- ແຜ່ນພັບກ່ຽວກັບການພັດທະນາວິຊາຊີບຄູແບບຕໍ່ເນື່ອງ 1 ແຜ່ນ
- USB 1 ອັນ ພ້ອມທັງຂໍ້ມູນລຸ່ມນີ້:
  - ສຳເນົາຄູ່ມືຄູ ຂັ້ນ ປ.5 ເປັນຟາຍ PDF
  - ຊຸດຟາຍການອອກສຽງວິດີໂອເພງ ແລະ ດົນຕີສຳລັບວິຊາພາສາອັງກິດ, ພາສາລາວ, ສິລະປະດົນຕີ ແລະ ພະລະສຶກສາ
  - ຊຸດຄູ່ມືຝຶກອົບຮົມສຳລັບຫຼັກສູດຂັ້ນ ປ.5
  - ວິດີໂອສຳລັບການພັດທະນາຄູ
  - ສາລະຄະດີຄູຕົວແບບ

ຊຸດອຸປະກອນສື່ການຮຽນການສອນເຫຼົ່ານີ້ ຈະຖືກແຈກຢາຍໃຫ້ຄູຂັ້ນ ປ.5 ທຸກຄົນ ຊຶ່ງຄູ ຫຼື ຜູ້ອຳນວຍການສາມາດໄປຮັບເອົາຢູ່ຫ້ອງການສຶກສາທິການ ແລະ ກິລາເມືອງ ຫຼື ໃນລະຫວ່າງການຝຶກອົບຮົມຄູ.

ກະຊວງສຶກສາທິການ ແລະ ກິລາ ຈະສະໜອງຊຸດອຸປະກອນສື່ການຮຽນການສອນສຳລັບວິຊາອື່ນໆຂອງຂັ້ນ ປ.5.

ສາມາດເຂົ້າເບິ່ງອຸປະກອນການຮຽນການສອນເພີ່ມຕື່ມຜ່ານທາງອອນລາຍໂດຍການສະແກນຄິວອາໂຄດເພື່ອເຂົ້າເບິ່ງວິດີໂອສຳລັບການຝຶກອົບຮົມ, ເຄື່ອງມືຊ່ວຍເຫຼືອຄູ ຫຼື ຟາຍການສອນສຽງ ເພື່ອນຳໃຊ້ເຂົ້າໃນການຮຽນການສອນໃນຫ້ອງຮຽນ.

**Teacher Development Videos**
**(ວິດີໂອສຳລັບການພັດທະນາຄູ)**

**Teacher Development Resources**
**(ອຸປະກອນສຳລັບການພັດທະນາຄູ)**

# ວິຊາພາສາລາວ ຊັ້ນ ປ.5




ຫຼັກສູດວິຊາພາສາລາວ ຊັ້ນ ປ.5 ຈະຊ່ວຍໃຫ້ນັກຮຽນພັດທະນາທັກສະທາງດ້ານພາສາລາວໃຫ້ດີຂຶ້ນໂດຍອີງໃສ່ອົງປະກອບຫຼັກເຊັ່ນ: ການຟັງ, ການເວົ້າ, ການອ່ານ ແລະ ການຂຽນ ໂດຍຜ່ານວິທີການຮຽນການສອນແບບເນັ້ນການປະຕິບັດຕົວຈິງ.

ບົດຮຽນໄດ້ຖືກອອກແບບ ແລະ ຈັດສັນພາຍໃຕ້ຫົວຂໍ້ຕ່າງໆ ຊຶ່ງຫົວຂໍ້ເຫຼົ່ານັ້ນແມ່ນມີຄວາມກ່ຽວພັນກັບສະພາບແວດລ້ອມຂອງນັກຮຽນ ແລະ ເຮັດໃຫ້ພວກເຂົາມີຄວາມສົນໃຈຕໍ່ກັບການຮຽນຮູ້. ໜຶ່ງຫົວຂໍ້ແມ່ນຈະຖືກນຳໃຊ້ເຂົ້າໃນບົດຮຽນສອງບົດ ເພື່ອໃຫ້ໂອກາດນັກຮຽນໄດ້ສຶກສາກ່ຽວກັບຫົວຂໍ້ນັ້ນໆຢ່າງເລິກເຊິ່ງ ແລະ ເປັນການພັດທະນາການໃຊ້ພາສາຂອງນັກຮຽນທີ່ກ່ຽວພັນກັບຫົວຂໍ້ດັ່ງກ່າວ. ຄຳຖາມແນະນຳຢູ່ໃນແຕ່ລະບົດຮຽນ ແມ່ນເນັ້ນໃສ່ຫົວຂໍ້ໃດໜຶ່ງ ຊຶ່ງເປັນການສົ່ງເສີມໃຫ້ນັກຮຽນໄດ້ພັດທະນາ ແລະ ສະແດງຄວາມຄິດຂອງພວກເຂົາ.

ເຊັ່ນດຽວກັບ ຊັ້ນ ປ.3 ແລະ ຊັ້ນ ປ.4, ບົດຮຽນໃນຊັ້ນ ປ.5 ແມ່ນມີການຈັດສັນໂດຍອີງໃສ່ປະເພດບົດຕ່າງໆ. ປະເພດບົດຕ່າງໆເຫຼົ່ານີ້ແມ່ນເປັນພື້ນຖານຂອງບົດຮຽນ ຊຶ່ງປະກອບມີ 4 ທັກສະການຮຽນທີ່ສຳຄັນຄື: ການເວົ້າ, ການຟັງ, ການອ່ານ ແລະ ການຂຽນ. ຢູ່ໃນບົດຮຽນຂອງວິຊາພາສາລາວ ເລີ່ມແຕ່ຊັ້ນ ປ.3 ແມ່ນໄດ້ນຳໃຊ້ປະເພດບົດອັນດຽວກັນ, ຊຶ່ງມັນໄດ້ສ້າງຄວາມສອດຄ່ອງໃຫ້ແກ່ບົດຮຽນໃນຫ້ອງຄວບ ພ້ອມທັງຊີ້ໃຫ້ເຫັນວ່າປະເພດບົດແມ່ນມີຄວາມຊັບຊ້ອນຂຶ້ນຕາມຊັ້ນຮຽນ.

ແຕ່ລະບົດຮຽນໃນຊັ້ນ ປ. 5 ຈະມີ 20 ຂັ້ນຕອນ, ຊຶ່ງແຕ່ລະຂັ້ນຕອນແມ່ນເປັນພື້ນຖານຂອງຂັ້ນຕໍ່ໆໄປ ແລະ ເປັນການປະກອບສ່ວນໃນການພັດທະນາທັກສະທີ່ຈຳເປັນຂອງພວກເຂົາໃນບົດຮຽນຂອງວິຊາພາສາລາວ. ຂັ້ນຕອນທີ 1 ຫາ 5 ແມ່ນເນັ້ນໃສ່ທັກສະການອ່ານ; ຢູ່ໃນຊັ້ນ ປ.5 ນັກຮຽນຈະໄດ້ສືບຕໍ່ການຮຽນກ່ຽວກັບວິທີການອ່ານ ເພື່ອຄວາມເຂົ້າໃຈ ເພື່ອນຳໃຊ້ວິທີການເຫຼົ່ານີ້ກ່ອນ, ໃນລະຫວ່າງ ແລະ ຫຼັງການອ່ານບົດເລື່ອງ.ວິທີການເຫຼົ່ານີ້ ຈະຖືກນຳສະເໜີ ແລະ ໄດ້ຮັບການຝຶກຝົນໂດຍນຳໃຊ້ບົດເລື່ອງທີ່ຂຽນຂຶ້ນມາສຳລັບບົດຮຽນນັ້ນໆ.



ຂັ້ນຕອນທີ 6 ຫາ 9 ແມ່ນເນັ້ນໃສ່ການເວົ້າ ຊຶ່ງແນວຄວາມຄິດ ແລະ ພາສາຈາກບົດເລື່ອງແມ່ນຖືກນຳໃຊ້ເຂົ້າໃນການສອນໄວຍາກອນ ແລະ ຄຳສັບຕ່າງໆ ເພື່ອໃຫ້ນັກຮຽນໄດ້ຄົ້ນຄິດກ່ຽວກັບຄຳຖາມແນະແນວ. ວິທີການເຫຼົ່ານີ້ໄດ້ມີການຮຽນຮູ້ໂດຍຜ່ານການອ່ານ ແລະ ການຟັງ.

ສຳລັບຂັ້ນຕອນທີ 10 ຫາ 14 ນັກຮຽນ ຈະໄດ້ຮຽນກ່ຽວກັບປະເພດບົດຕ່າງໆ, ຊຶມເລິກຄວາມຄິດຂອງນັກຮຽນ ກ່ຽວກັບຄຳຖາມແນະແນວ, ທວນຄືນການສະກົດຄຳ, ການນຳໃຊ້ເຄື່ອງໝາຍວັກຕອນ ຫຼື ຫັດຂຽນງາມ ພ້ອມທັງຝຶກການນຳໃຊ້ໄວຍາກອນ ແລະ ຄຳສັບໃໝ່ໆທີ່ໄດ້ຮຽນຮູ້ມາກ່ອນໜ້ານີ້. ໃນຂັ້ນຕອນນີ້ແມ່ນການເນັ້ນໜັກການຂຽນ.

ສຸດທ້າຍ, ໃນຂັ້ນຕອນທີ 15 ຫາ 20 ນັກຮຽນຈະໄດ້ເຮັດກິດຈະກຳການເວົ້າ ແລະ ການຂຽນທີ່ເຂົາເຈົ້າສາມາດນຳໃຊ້ ສິ່ງທີ່ເຂົາເຈົ້າໄດ້ຮຽນຮູ້ ແລະ ສະແດງຄວາມຄິດຂອງຕົນເອງ ທີ່ກ່ຽວກັບຄຳຖາມແນະແນວ. ນັກຮຽນປະຕິບັດຕາມຂະບວນການການຂຽນ ໃນການວາງແຜນການຮຽນ, ການຮ່າງ, ການແກ້ໄຂ ແລະ ການເຜີຍແຜ່ ຫຼື ນຳສະເໜີວຽກງານຂອງເຂົາເຈົ້າ ໃນລະຫວ່າງຂັ້ນຕອນເຫຼົ່ານີ້.

ການທົບທວນຄືນບົດຮຽນເປັນໄລຍະໆຕະຫຼອດປີ ແມ່ນເປັນການເປີດໂອກາດໃຫ້ນັກຮຽນໄດ້ທວນຄືນສິ່ງທີ່ພວກເຂົາໄດ້ຮຽນຮູ້ມາ. ບົດຮຽນທົບທວນຄືນແມ່ນມີ 15 ຂັ້ນຕອນ ແທນທີ່ຈະເປັນ 20 ຂັ້ນຕອນແຕ່ກໍອີງຕາມໂຄງສ້າງທີ່ຄ້າຍຄືກັນ.

ໃນແຕ່ລະບົດຮຽນ (ລວມທັງບົດຮຽນທີ່ໄດ້ປັບປຸງ), ຈະມີເກມການປະເມີນຜົນການຮຽນ 1 ເກມສຳລັບການຟັງ, 1 ເກມສຳລັບການເວົ້າ, 1 ເກມສຳລັບການອ່ານ ແລະ 1 ເກມສຳລັບການຂຽນ. ການປະເມີນແຕ່ລະອັນແມ່ນສາມາດພົບໄດ້ໃນແຜນບົດສອນ.

ບົດຮຽນວິຊາພາສາລາວມີ 1 ບົດສອນຕໍ່ອາທິດ
ແລະ ໜຶ່ງບົດສອນມີ 8 ຊົ່ວໂມງ.






# ວິຊາພາສາອັງກິດ ຊັ້ນ ປ.5




ຫຼັກສູດຊັ້ນປະຖົມສຶກສາ ຊັ້ນ ປ.5 ວິຊາພາສາອັງກິດສະບັບປັບປຸງໃໝ່ ແມ່ນໄດ້ຖືກອອກແບບ ໂດຍນຳໃຊ້ວິທີການສອນ ແບບເນັ້ນການສື່ສານ ເພື່ອຊ່ວຍໃຫ້ນັກຮຽນສາມາດໃຊ້ພາສາອັງກິດໃນການສື່ສານໃນຊີວິດປະຈຳວັນຂອງພວກເຂົາ.

ໃນຫຼັກສູດຊັ້ນປະຖົມສຶກສາ ຊັ້ນ ປ.5 ນັກຮຽນສືບຕໍ່ຮຽນຄຳສັບທີ່ມີປະໂຫຍດ ແລະ ໂຄງສ້າງຂອງໄວຍາກອນແບບງ່າຍໆ/ພື້ນຖານ ເພື່ອພັດທະນາທັກສະພາສາອັງກິດທີ່ພວກເຂົາໄດ້ຮຽນຮູ້ຜ່ານມາໃນຊັ້ນ ປ.3 ແລະ ຊັ້ນ ປ.4.

ຫຼັກສູດນີ້ ເນັ້ນໃສ່ການພັດທະນາທັກສະການຟັງ ແລະ ການເວົ້າ ເພື່ອໃຫ້ນັກຮຽນໄດ້ຝຶກຝົນພາສາອັງກິດທີ່ຫຼາກຫຼາຍ ລວມທັງການພັດທະນາທັກສະການເວົ້າທີ່ຈຳເປັນໃນການອ່ານ ແລະ ການຂຽນຂອງພວກເຂົາທີ່ໄດ້ຮຽນຮູ້ຜ່ານມາໃນຊັ້ນ ປ.3 ແລະ ຊັ້ນ ປ.4.

ທັກສະການອ່ານ ແລະ ການຂຽນໄດ້ຮັບການພັດທະນາໂດຍຜ່ານການອອກສຽງ ຊຶ່ງເປັນແນວທາງການຮຽນການສອນແບບໃໝ່ທີ່ໄດ້ເພີ່ມເຂົ້າມາໃນຫຼັກສູດສະບັບປັບປຸງໃໝ່ນີ້. ໃນການຝຶກການອອກສຽງ, ນັກຮຽນໄດ້ຮຽນກ່ຽວກັບການເຊື່ອມໂຍງຕົວອັກສອນ ແລະ ສຽງ ເພື່ອນຳເອົາຄວາມຮູ້ນີ້ມາໃຊ້ໃນການອ່ານ ແລະ ຂຽນຄຳສັບງ່າຍໆໄດ້. ຂໍ້ມູນເພີ່ມເຕີມກ່ຽວກັບການອອກສຽງຕ່າງໆ ແມ່ນສາມາດພົບໄດ້ໃນປຶ້ມຄູ່ມືຄູ ຊັ້ນ ປ.5 ວິຊາພາສາອັງກິດ ແລະ ເຂົ້າເບິ່ງວີດີໂອຢູ່ຊ່ອງຢູທູບ "ວີດີໂອສຳລັບການພັດທະນາຄູ/Teacher Development Videos".

ຄຳແນະນຳຂອງຂັ້ນຕອນຕ່າງໆໃນການສອນບົດຮຽນພາສາອັງກິດພ້ອມທັງຄຳແປພາສາ ແລະ ເນື້ອຫາທີ່ສຳຄັນ ແມ່ນສາມາດພົບໄດ້ໃນປຶ້ມຄູ່ມືຄູຊັ້ນ ປ.5. ຄູຍັງຈະໄດ້ຮັບອຸປະກອນປະກອບການສອນ ໃນຮູບແບບຊຸດບັດຄຳ, ຊຸດຟາຍສຽງ ແລະ ໂປສະເຕີ. ຊຸດບັດຄຳລວມມີບັດການອອກສຽງ, ບັດຄຳສັບ ແລະ ບັດຮູບພາບ ທີ່ລວມມີຄຳແນະນຳກ່ຽວກັບວິທີນຳໃຊ້ໃນແຕ່ລະບົດຮຽນ. ບັດຄຳສັບປະກອບມີການອອກສຽງ, ຄຳສັບ ແລະ ບັດຮູບພາບ ແລະ ໂປສະເຕີທີ່ປະກອບມີໂປສະເຕີຂະໜາດ A4 ເພື່ອເປັນເອກະສານແນະນຳສຳລັບການອອກສຽງ; ໂປສະເຕີ sight word ຂະໜາດ A1 ແລະ ໂປສະເຕີການອອກສຽງໃນພາສາອັງກິດ. ຊຸດຟາຍການບັນທຶກສຽງລວມມີ 104 ຟາຍສຽງທີ່ເປັນພາສາອັງກິດ ທີ່ບັນຈຸໄວ້ໃນ USB ຊຶ່ງໄດ້ຖືກອອກແບບໄວ້ເພື່ອນຳໃຊ້ຄວບຄູ່ກັບການສອນ.




ປຶ້ມແບບຮຽນຊັ້ນ ປ.5 ນີ້ຈະມີຮູບພາບເດັກນ້ອຍລາວຈຳນວນ 6 ຄົນ ແລະ ເດັກນ້ອຍຕ່າງປະເທດຈຳນວນ 3 ຄົນ. ຮູບພາບຂອງພວກເຂົາເຈົ້າ ແລະ ຄອບຄົວຈະປາກົດຢູ່ໃນປຶ້ມແບບຮຽນແຕ່ຕົ້ນຈົນຈົບ ແລະ ຈະຊ່ວຍເຮັດໃຫ້ບໍລິບົດຂອງພາສາໃໝ່ມີຄວາມໝາຍສຳລັບນັກຮຽນ ແລະ ສາມາດເຂົ້າໃຈໄດ້ດີຂຶ້ນ.

ການຮຽນການສອນທີ່ເນັ້ນໃຫ້ນັກຮຽນໄດ້ປະຕິບັດຕົວຈິງ ໄດ້ຮັບການສົ່ງເສີມຜ່ານກິດຈະກຳທີ່ໜ້າສົນໃຈ ໄດ້ແກ່ການເຮັດວຽກເປັນຄູ່ ແລະ ເປັນກຸ່ມ, ການສະແດງບົດບາດສົມມຸດ, ການຫຼິ້ນເກມ, ບົດເລື່ອງ ແລະ ກິດຈະກຳທີ່ສ້າງສັນ. ຫຼາຍກິດຈະກຳຍັງລວມເອົາ ອົງປະກອບທາງດ້ານປະສາດສຳຜັດເພື່ອໃຫ້ນັກຮຽນໄດ້ຮຽນໂດຍຜ່ານ *ການເບິ່ງ, ການຟັງ* ແລະ *ການປະຕິບັດ*.




ປຶ້ມແບບຮຽນປະກອບມີ 7 unit ພ້ອມທັງມີບົດແນະນຳເຂົ້າສູ່ບົດຮຽນ ແລະ ບົດທວນຄືນ. ໃນແຕ່ລະ Unit ມີບົດຮຽນ 4 ບົດ ແລະ ແຕ່ລະບົດມີ 3 ຊົ່ວໂມງ.



# ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ຊັ້ນ ປ.5




ຫຼັກສູດວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ຊັ້ນ ປ.5 ສະບັບປັງປຸງໃໝ່ນີ້ ສືບຕໍ່ໃຊ້ແນວຄວາມຄິດໃນການພັດທະນາຄວາມຮູ້ດ້ານວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ທັກສະທີ່ນັກຮຽນໄດ້ຮຽນຮູ້ໃນຊັ້ນຮຽນທີ່ຜ່ານມາ. ໃນຊັ້ນ ປ.5 ນັກຮຽນຈະໄດ້ສືບຕໍ່ລົງເລິກການສຳຫຼວດກ່ຽວກັບຫົວຂໍ້ຄວາມປອດໄພຂອງຕົນເອງ, ໂລກອ້ອມຕົວເຮົາ, ຮ່າງກາຍຂອງຂ້ອຍ, ສັດ, ພືດ, ຄວາມຮ້ອນ ແລະ ວັດຖຸ, ໂລກ, ອາວະກາດ ແລະ ພະລັງງານ, ບັນຫາສະພາບແວດລ້ອມ ແລະ ເຕັກໂນໂລຊີ.

ຫຼັກສູດວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ຊັ້ນ ປ.5 ສະບັບປັງປຸງໃໝ່ນີ້ ສົ່ງເສີມໃຫ້ນັກຮຽນເຂົ້າໃຈສະພາບໂລກອ້ອມຕົວຂອງຕົນເອງໂດຍການເຊື່ອມໂຍງວິທະຍາສາດກັບກິດຈະກຳປະຈຳວັນ ແລະ ສະພາບຢູ່ໃນທ້ອງຖິ່ນຂອງນັກຮຽນ. ນັກຮຽນຈະໄດ້ສຳຫຼວດສະພາບແວດລ້ອມຢູ່ໃນທ້ອງຖິ່ນຂອງຕົນເອງ, ເຫດການທີ່ເກີດຂຶ້ນຈາກມະນຸດ ແລະ ຈາກທຳມະຊາດ ທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງນັກຮຽນ ແລະ ແນວຄວາມຄິດທາງວິທະຍາສາດທີ່ເປັນຫຼັກພື້ນຖານຂອງເຫດການເຫຼົ່ານັ້ນ.




ນັກຮຽນຈະໄດ້ມີການສືບຕໍ່ລົງເລິກພັດທະນາທັກສະຂະບວນການທາງດ້ານວິທະຍາສາດ ໂດຍຜ່ານການນຳໃຊ້ທັກສະເຫຼົ່ານີ້ ນັກຮຽນຈະສາມາດພັດທະນາຄວາມຮູ້ດ້ານວິທະຍາສາດ, ສ້າງການຄາດຄະເນ ແລະ ສ້າງການທົດລອງເພື່ອພິສູດການຄາດຄະເນຂອງຕົນເອງ ແລະ ປັບປ່ຽນຄຳອະທິບາຍຂອງຕົນເອງໂດຍອີງຕາມຫຼັກຖານທາງວິທະຍາສາດ. ນັກຮຽນຈະໄດ້ເຮັດວຽກເປັນກຸ່ມເພື່ອສົນທະນາ ແລະ ວິເຄາະຂໍ້ມູນເພື່ອເອົາມາສ້າງຂໍ້ສະຫຼຸບຕາມຫຼັກຖານທາງວິທະຍາສາດ.

ຫຼັກສູດວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ຊັ້ນ ປ.5 ສະບັບປັງປຸງໃໝ່ນີ້ ແມ່ນຖືກອອກແບບມາເພື່ອສົ່ງເສີມການມີສ່ວນຮ່ວມຂອງນັກຮຽນໃນດ້ານວິທະຍາສາດ ໂດຍຜ່ານການຮຽນຮູ້ແບບລົງມືປະຕິບັດຕົວຈິງ. ນອກນີ້, ຫຼັກສູດຍັງຖືກອອກແບບມາໃຫ້ທຸກຄົນສາມາດເຂົ້າເຖິງໄດ້ງ່າຍ ແລະ ເໝາະສົມກັບນັກຮຽນທຸກຄົນ. ກໍລະນີສຶກສາຕ່າງໆຈະເຊື່ອມໂຍງກັບເນື້ອໃນວິທະຍາສາດພ້ອມທັງລວມເອົາບົດບາດຂອງແມ່ຍິງເຂົ້າໃນຂະແໜງວິທະຍາສາດພ້ອມ. ດັ່ງນັ້ນ, ເພື່ອເຮັດໃຫ້ນັກຮຽນທຸກຄົນສາມາດເຂົ້າເຖິງການທົດລອງ ຈຶ່ງໄດ້ອອກແບບຫຼັກສູດເພື່ອໃຫ້ສາມາດນຳໃຊ້ວັດຖຸສິ່ງຂອງທີ່ຫາໄດ້ງ່າຍ, ມີຢູ່ທົ່ວໄປພ້ອມທັງສາມາດນຳກັບມາໃຊ້ຄືນໄດ້ເຊັ່ນ: ປຸ່ມເປົ້າ, ຕຸກນໍ້າຢາງເປົ່າ, ວັດສະດຸທ້ອງຖິ່ນ, ພືດ, ສັດ ແລະ ລະບົບນິເວດຕ່າງໆ.

ຍຸດທະສາດຂອງການຮຽນແບບເນັ້ນການປະຕິບັດຕົວຈິງ ແມ່ນການສົ່ງເສີມການສຳຫຼວດວຽກງານຕົວຈິງ, ການສັງເກດ, ການສົນທະນາເປັນກຸ່ມ, ຫຼັກການໃນການທົດສອບ ໂດຍນຳໃຊ້ຫຼັກການທົດລອງແບບທຳມະດາທີ່ເຂົ້າໃຈໄດ້ງ່າຍພ້ອມທັງການເກັບກຳຂໍ້ມູນໃນຮູບແບບຕ່າງໆ, ການບັນທຶກຂໍ້ມູນ, ການວິເຄາະ ແລະ ວິທີການສື່ສານ. ບົດບາດຂອງຄູ ແມ່ນສະໜັບສະໜູນນັກຮຽນໃຫ້ມີການຕັ້ງຄຳຖາມດ້ວຍຕົນເອງ ແລະ ຊອກຫາຄຳຕອບ ໂດຍໃຊ້ແນວຄວາມຄິດ ແລະ ນຳໃຊ້ວິທີການທາງວິທະຍາສາດ.

ສື່ການຮຽນການສອນຂອງວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ຂອງຊັ້ນ ປ.5 ຈະປະກອບມີຊຸດເຄື່ອງມືວິທະຍາສາດ 1 ຊຸດຕໍ່ຫ້ອງຮຽນ ແລະ ວິທີການຊ່ວຍເຫຼືອຄູໃນການກະກຽມອຸປະກອນທີ່ຈຳເປັນໃນການສອນແຕ່ລະບົດ ຊຶ່ງເປັນຂໍ້ມູນກ່ຽວກັບອຸປະກອນທີ່ຕ້ອງໄດ້ໃຊ້ ໃນການຮຽນການສອນ ແລະ ສາມາດເຫັນໄດ້ຢູ່ໃນປຶ້ມຄູ່ມືຄູ ຊຶ່ງເປັນສື່ການຮຽນການສອນຂອງວິຊາວິທະຍາສາດ ແລະ ສິ່ງແວດລ້ອມ ຊັ້ນ ປ.5. ໂດຍທົ່ວໄປແລ້ວ ຄູຈະຕ້ອງກະກຽມກິດຈະກຳເກືອບທັງໝົດກ່ອນທຸກຄັ້ງ ເພື່ອປະຢັດເວລາໃນຊົ່ວໂມງສອນ. ແຕ່ລະບົດຮຽນຄູຍັງຕ້ອງໄດ້ກະກຽມວັດສະດຸທີ່ສາມາດຍ່ອຍສະຫຼາຍໄດ້ ຫຼື ນຳໃຊ້ພືດ ທີ່ສາມາດຫາໄດ້ຢູ່ຕາມທ້ອງຖິ່ນ. ວັດສະດຸສິ່ງຂອງທີ່ໃຊ້ໃນການຮຽນສາມາດປັບປ່ຽນໄດ້ໃນແຕ່ລະປີ; ໃນແຕ່ລະໂຮງຮຽນ ຂຶ້ນກັບສະພາບເງື່ອນໄຂ ເພາະວ່າແຕ່ລະທ້ອງຖິ່ນມີວັດສະດຸສິ່ງຂອງທີ່ແຕກຕ່າງກັນ.







# ການວາງແຜນການສອນ

ຮ່າງແຜນການສອນ ໄດ້ຮັບການປັບປຸງໂດຍໃຫ້ສອດຄ່ອງກັບໂຄງສ້າງໃນປຶ້ມຄູ່ມືຄູສະບັບປັບປຸງໃໝ່ ແລະ ແນວທາງໃນການ ສະໜັບສະໜູນຄູສອນໃນການວາງແຜນການສອນໃຫ້ດີຂຶ້ນກວ່າເກົ່າ. ຮ່າງແຜນການສອນຫ້ອງຄວບ ກໍໄດ້ຮັບການປັບປຸງເຊັ່ນດຽວກັນ.

ຄູຄວນອ່ານເອກະສານກ່ຽວກັບການວາງແຜນການສອນ ເພື່ອສ້າງຄວາມເຂົ້າໃຈວ່າຈະວາງແຜນການສອນທີ່ມີປະສິດທິພາບໄດ້ຄືແນວໃດ.

ຮ່າງແຜນການສອນ ໄດ້ແບ່ງອອກເປັນ 5 ພາກ. ພາກທີ 1-4 ຂອງຮ່າງແຜນການສອນຕ້ອງການໃຫ້ຄູຕື່ມຂໍ້ມູນຂອງແຕ່ລະບົດຮຽນໃສ່. ສ່ວນພາກທີ 5 (ພາກກິດຈະກຳການຮຽນການສອນ) ແມ່ນຕ້ອງເຮັດໃຫ້ສຳເລັດໃນແຕ່ລະຊົ່ວໂມງຂອງການສອນແຕ່ລະວິຊາ.

### ຍຸດທະສາດສຳຄັນສຳລັບການວາງແຜນການສອນທີ່ມີປະສິດທິພາບ

» ອ່ານເອກະສານກ່ຽວກັບການວາງແຜນການສອນ

» ຝຶກວາງແຜນການສອນ ແລະ ສົມທຽບແຜນການສອນຂອງທ່ານໃສ່ກັບບົດສອນສົມບູນທີ່ໄດ້ເຮັດໄວ້ເປັນຕົວຢ່າງ (ເບິ່ງເອກະສານທີ່ໄດ້ແຈກຢາຍກ່ຽວກັບການຝຶກອົບຮົມຄູ)

» ສຳລັບຄູຊັ້ນ ປ. 5 ທີ່ສອນຫ້ອງຄວບ, ໃຫ້ຝຶກການວາງແຜນການສອນສຳລັບບົດຮຽນບົດທີ 1 ໃນວິຊາພາສາລາວ ແລະ ໃຫ້ສົມທຽບກັບແຜນການສອນວິຊາພາສາລາວທີ່ມີໃນປຶ້ມຄູ່ມືຄູ ຊັ້ນ ປ.4 ຊຶ່ງມີຕົວຢ່າງບົດຮຽນການສອນຫ້ອງຄວບ ຊັ້ນ ປ.3 ແລະ ປ.4

» ໃຫ້ປຶກສາກັບຜູ້ເຮັດວຽກສຶກສານິເທດ ຫຼື ຄູຝຶກຂັ້ນແຂວງ ທີ່ຢູ່ໃນເມືອງຂອງທ່ານ, ຜູ້ອຳນວຍການ ຫຼື ຄູສອນໃນໂຮງຮຽນທີ່ມີປະສົບການ ເພື່ອໃຫ້ຄວາມຮູ້ເພີ່ມກ່ຽວກັບບົດສອນແບບໃໝ່

### ຊຸດເຄື່ອງມືສື່ການຮຽນການສອນສຳລັບຄູຊັ້ນ ປ.5

ເອກະສານແຈກຢາຍ:

» ຂໍ້ມູນຕ່າງໆ ກ່ຽວກັບແຜນການສອນ
» ຮ່າງແຜນການສອນ ຫ້ອງດ່ຽວ (ຮ່າງເປົ່າ)
» ຮ່າງແຜນການສອນ ຫ້ອງດ່ຽວ (ພ້ອມດ້ວຍຄຳແນະນຳ)
» ຕົວຢ່າງຮ່າງແຜນການສອນ ຫ້ອງດ່ຽວ ທີ່ສຳເລັດສົມບູນແລ້ວ
» ຮ່າງແຜນການສອນ ຫ້ອງຄວບ (ຮ່າງເປົ່າ)
» ຮ່າງແຜນການສອນ ຫ້ອງຄວບ (ພ້ອມດ້ວຍຄຳແນະນຳ)
» ຮ່າງແຜນການສອນທີ່ສຳເລັດສົມບູນແລ້ວສຳລັບວິຊາພາສາລາວ, ວິຊາພາສາອັງກິດ ແລະ ວິຊາວິທະຍາສາດ ແລະ ສິ່ງແວດລ້ອມ





# ການປະເມີນ

ການປະເມີນ ແມ່ນພາກສ່ວນໜຶ່ງທີ່ສຳຄັນໃນຂະບວນການຮຽນ ເນື່ອງຈາກມັນບົ່ງບອກວ່າ ຈຸດປະສົງຂອງການຮຽນໄດ້ບັນລຸເປົ້າໝາຍທີ່ວາງໄວ້ ຫຼື ບໍ່. ນອກຈາກນີ້ມັນຍັງຊ່ວຍໃຫ້ຄູຮູ້ວ່າ ນັກຮຽນໄດ້ຮຽນຫຍັງແດ່, ໄດ້ຮຽນຮູ້ຫຼາຍປານໃດ ແລະ ສາມາດນຳໃຊ້ໄດ້ຄືແນວໃດ, ພ້ອມນີ້ ການປະເມີນຍັງບົ່ງບອກໃຫ້ຮູ້ວ່າ ນັກຮຽນຕ້ອງການການຊ່ວຍເຫຼືອຫຍັງເພີ່ມແດ່ ເພື່ອໃຫ້ບັນລຸຈຸດປະສົງຂອງບົດຮຽນ. ການປະເມີນຈະຊ່ວຍໃຫ້ຄູເຂົ້າໃຈວ່າ ນັກຮຽນມີການຮຽນດີຂຶ້ນຫຼາຍພຽງໃດ ແລະ ນັກຮຽນຕ້ອງການການຊ່ວຍເຫຼືອເພີ່ມ ຫຼື ບໍ່. ສິ່ງເຫຼົ່ານີ້ ແມ່ນເປັນການຮັບປະກັນວ່າ ນັກຮຽນມີຄວາມຮູ້ສຶກວ່າເຂົາເຈົ້າໄດ້ຮັບການຊ່ວຍເຫຼືອ ແລະ ມີແຮງຈູງໃຈໃນການເຂົ້າຮ່ວມກິດຈະກຳການຮຽນຢ່າງຫ້າວຫັນ.

ການປະເມີນມີ 2 ຮູບແບບ: ການປະເມີນເພື່ອປັບປຸງຜົນການຮຽນ ແລະ ການປະເມີນເພື່ອສະຫຼຸບຜົນການຮຽນ, ຊຶ່ງຫຼັກສູດຊັ້ນປະຖົມສຶກສາແຫ່ງຊາດສະບັບປັບປຸງໃໝ່ ໄດ້ນຳໃຊ້ການປະເມີນທັງສອງຢ່າງນີ້. ການປະເມີນເພື່ອສະຫຼຸບຜົນການຮຽນ ແມ່ນໄດ້ນຳໃຊ້ເພື່ອກວດເບິ່ງວ່ານັກຮຽນໄດ້ບັນລຸຈຸດປະສົງໃນຕອນທ້າຍຂອງແຕ່ລະບົດຮຽນແລ້ວ ຫຼື ບໍ່. ການປະເມີນເພື່ອປັບປຸງຜົນການຮຽນ ແມ່ນນຳໃຊ້ເພື່ອໃຫ້ຄູເຂົ້າໃຈວ່ານັກຮຽນມີພັດທະນາການແນວໃດໃນແຕ່ລະວັນ, ເພື່ອໃຫ້ຄູສາມາດປັບວິທີການສອນ ແລະ ໃຫ້ການສະໜັບສະໜູນນັກຮຽນໂດຍອີງໃສ່ຄວາມຄືບໜ້າໃນການຮຽນຂອງພວກເຂົາໄດ້.

ໃນຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່ນີ້ ຄູຄວນນຳໃຊ້ການປະເມີນດ້ວຍ ຮູບິກ ແທນການນຳໃຊ້ການກວດກາປະຈຳອາທິດ ຫຼື ປະຈຳເດືອນ ດ້ວຍການເສັງຂຽນຢ່າງເປັນທາງການ. ການປະເມີນຜົນການຮຽນດ້ວຍ ຮູບິກ ຄວນນຳໃຊ້ ເພື່ອໃຫ້ຄະແນນນັກຮຽນໃນຕອນທ້າຍຂອງບົດຮຽນ. ຕົວເລກຄະແນນເຫຼົ່ານີ້ ຕ້ອງໄດ້ເອົາໄປຄຳນວນໂດຍໃຊ້ສູດການຄິດໄລ່ ແລະ ບັນທຶກໄວ້ໃນປຶ້ມບັນທຶກຂອງຄູເອງ. ສຳລັບຂໍ້ມູນເພີ່ມຕື່ມກ່ຽວກັບການປະເມີນດ້ວຍ ຮູບິກ ນີ້, ທ່ານສາມາດເຂົ້າໄປຊອກຫາຂໍ້ມູນດັ່ງກ່າວໄດ້ທີ່ປຶ້ມຄູ່ມືຄູວິຊາພາສາລາວ ຊັ້ນ ປ.5 ແລະ ວິດີໂອທີ 2 ສຳລັບການຝຶກອົບຮົມຄູ.

ການສັງເກດ ແລະ ການຕັ້ງຄຳຖາມ ແມ່ນສອງເຕັກນິກທີ່ສຳຄັນໃນການດຳເນີນການປະເມີນນັກຮຽນ ແລະ ທ່ານສາມາດສຶກສາຂໍ້ມູນເພີ່ມຕື່ມກ່ຽວກັບເຕັກນິກດັ່ງກ່າວໄດ້ຢູ່ໃນວິດີໂອການພັດທະນາຄູທີ 12 A ແລະ 12 B.



**ຊຸດເຄື່ອງມືສື່ການຮຽນການສອນ ສຳລັບຄູ ຊັ້ນ ປ.5**

- ຄຳແນະນຳສຳລັບການປະເມີນແບບ ຮູບິກ ແມ່ນມີຢູ່ໃນຕອນຕົ້ນຂອງແຕ່ລະບົດຢູ່ໃນປຶ້ມຄູ່ມືຄູ
- 4 ວິດີໂອ ກ່ຽວກັບການປະເມີນຜົນການຮຽນຂອງນັກຮຽນທີ່ຢູ່ໃນຊ່ອງຢູທູບ ວິດີໂອສຳລັບການພັດທະນາຄູ
- ປຶ້ມຄູ່ມືສຳລັບສຳມະນາກອນໃນການຝຶກອົບຮົມຫຼັກສູດ ຊັ້ນ ປ.5
- ຜູ້ເຮັດວຽກສຶກສານິເທດ ຫຼື ຄູຝຶກຂັ້ນແຂວງທີ່ໄດ້ໃຫ້ການຊ່ວຍເຫຼືອພິເສດ
- ໃຫ້ທ່ານປຶກສາຫາລືກັບຄູ ຊັ້ນ ປ.1 ເຖິງ ຊັ້ນ ປ.4 ຜູ້ທີ່ນຳໃຊ້ວິທີການປະເມີນຜົນການຮຽນຂອງນັກຮຽນແບບໃໝ່ໃນ 1-4 ປີຜ່ານມາ



ສາມາດເຂົ້າເບິ່ງວິດີໂອ ໂດຍຜ່ານທາງຊ່ອງຢູທູບ "**ວິດີໂອສຳລັບການພັດທະນາຄູ**/Teacher Development Videos" ແລະ ສາມາດສະແກນຄິວອາໂຄດເພື່ອເຂົ້າເບິ່ງວິດີໂອການປະເມີນຜົນການຮຽນຂອງນັກຮຽນ

# ຫ້ອງຄວບ

ການສອນສອງຂັ້ນຮຽນ ຫຼື ຫຼາຍຂັ້ນກວ່ານັ້ນໃນຫ້ອງຮຽນດຽວກັນ ແມ່ນມີຄວາມຫຍຸ້ງຍາກ ແລະ ຍັງຮຽກຮ້ອງໃຫ້ຄູຕ້ອງໄດ້ຊອກຫາວິທີການສອນທີ່ມີຄວາມແຕກຕ່າງກັນເພື່ອຈັດການຮຽນການສອນ.

ຮູບແບບການສອນຫ້ອງຄວບແບບໃໝ່ແມ່ນໄດ້ຮັບການພັດທະນາຂຶ້ນ ຊຶ່ງມີເນື້ອໃນ ແລະ ຂໍ້ແນະນຳກ່ຽວກັບການສອນຫ້ອງຄວບ, ໂຄງສ້າງຂອງບົດສອນ, ເຕັກນິກ ແລະ ການຄຸ້ມຄອງຫ້ອງຮຽນ ຊຶ່ງເນື້ອໃນເຫຼົ່ານີ້ ສາມາດນຳໃຊ້ໄດ້ໃນວິຊາພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ, ແລະ ພາສາອັງກິດ. ນອກຈາກນີ້ ຍັງມີຮູບແບບການສອນຫ້ອງຄວບສຳລັບວິຊາຄະນິດສາດ ຊຶ່ງປະຈຸບັນແມ່ນຍັງທົດລອງຢູ່.

ຍັງມີບາງລາຍວິຊາເຊັ່ນ: ດົນຕີ, ສິລະປະກຳ ແລະ ຫັດຖະກຳ ຊຶ່ງເປັນວິຊາທີ່ມີຄວາມຫຍຸ້ງຍາກໃນການສອນລວມກັນ. ທ່ານສາມາດຊອກຫາຄຳແນະນຳເພີ່ມໃນປຶ້ມຄູ່ມືຄູວິຊາພາສາລາວ ຂັ້ນ ປ.5. ນອກນີ້ ທ່ານຍັງສາມາດເບິ່ງຕົວຢ່າງ ແລະ ອ່ານຄຳແນະນຳໃນການວາງແຜນການສອນສຳລັບຫ້ອງຄວບໄດ້ ຢູ່ໃນປຶ້ມຄູ່ມືຄູວິຊາພາສາລາວ ຂັ້ນ ປ. 3 ແລະ ຂັ້ນ ປ.4.

### ຍຸດທະສາດຫຼັກໆສຳລັບການສອນຫ້ອງຄວບທີ່ມີປະສິດທິພາບ

*ທັກສະການສອນຫ້ອງຄວບມີດັ່ງຕໍ່ໄປນີ້:*

- ອ່ານປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນລ່ວງໜ້າເພື່ອກຽມບົດສອນ
- ໃນການວາງແຜນການສອນນັ້ນ, ຂໍໃຫ້ຄູຄົ້ນຄິດກ່ຽວກັບວິທີການສອນທີ່ສາມາດດຳເນີນການສອນພາກນຳສະເໜີ ແລະ ພາກສະຫຼຸບໝົດຫ້ອງ ແລະ ຄູສາມາດດັດປັບບັນດາກິດຈະກຳແນວໃດ ເພື່ອສ້າງກິດຈະກຳເປັນຄູ່ ແລະ ກິດຈະກຳເປັນກຸ່ມໄດ້ຫຼາຍຂຶ້ນ
- ຖ້າເປັນໄປໄດ້, ໃຫ້ຄູຈັດໂຕະຕັ່ງໃນຫ້ອງຮຽນເປັນກຸ່ມ, ແລ້ວໃຫ້ນັກຮຽນຂັ້ນຮຽນດຽວກັນນັ່ງເປັນກຸ່ມໃນມຸມໜຶ່ງຂອງຫ້ອງຮຽນ ແລະ ຈັດໃຫ້ນັກຮຽນອີກຂັ້ນໜຶ່ງນັ່ງເປັນກຸ່ມຢູ່ອີກມຸມໜຶ່ງ
- ແບ່ງກະດານເປັນສອງເບື້ອງ; ແຕ່ລະເບື້ອງແມ່ນສຳລັບແຕ່ລະຂັ້ນຮຽນ
- ໃຫ້ໂອກາດນັກຮຽນເຮັດກິດຈະກຳເປັນຄູ່/ເປັນກຸ່ມຢ່າງເປັນເອກະລາດເພື່ອທີ່ທ່ານຈະສາມາດສຸມໃສ່ອີກຫ້ອງໜຶ່ງໄດ້
- ໃຫ້ກະກຽມກິດຈະກຳເພີ່ມໄວ້, ໃນກໍລະນີທີ່ນັກຮຽນບາງກຸ່ມເຮັດກິດຈະກຳແລ້ວໄວກ່ອນກຸ່ມອື່ນ ແມ່ນຄູສາມາດເອົາກິດຈະກຳອື່ນໃຫ້ນັກຮຽນກຸ່ມນັ້ນເຮັດເພີ່ມໃນຂະນະທີ່ລໍຖ້າກຸ່ມທີ່ເຮັດກິດຈະກຳທຳອິດບໍ່ທັນແລ້ວ
- ຄວບຄຸມເວລາໃຫ້ເໝາະສົມ ເພື່ອຮັບປະກັນວ່າທຸກກິດຈະກຳດຳເນີນໄປຕາມເວລາທີ່ວາງໄວ້ໃນປຶ້ມຄູ່ມືຄູ

### ຊຸດເຄື່ອງມືສື່ການຮຽນການສອນສຳລັບຄູ ຂັ້ນ ປ.5

ຊຸດປຶ້ມຄູ່ມືຄູ ແນະນຳກ່ຽວກັບການສອນຫ້ອງຄວບ

ຜູ້ເຮັດວຽກສຶກສານິເທດ ຫຼື ຄູຝຶກຂັ້ນແຂວງ ເພື່ອໃຫ້ການຊ່ວຍເຫຼືອພິເສດ



Australian Aid

**ແຜນງານບໍ່ຄວາແມ່ນແຜນງານທີ່ນຳພາໂດຍລັດຖະບານແຫ່ງ ສປປ ລາວ**
**ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ**

ຈັດພິມໃນເດືອນ ພຶດສະພາ 2023